# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ.. ໜ້າ 01-05**

**II. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ................................................... ໜ້າ 06-09**

**III. ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຄຕພ............................................ ໜ້າ 10**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ ຕຸລາ **2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 02/10/2023, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ຊຸດທີ 13 ໄດ້ຈັດກອງປະຊຸມສູນກາງ ຄັ້ງທີ 08 ພາຍໃຕ້ການເປັນປະທານຂອງ ສະຫາຍ ຫງວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ. ກອງປະຊຸມໄດ້ປຶກສາຫາລືໃນຫຼາຍບັນຫາໂດຍສະເພາະດ້ານເສດຖະກິດ-ສັງຄົມ, ງົບປະມານສົກປີ 2024-2026, ນະໂຍບາຍເງິນເດືອນສະບັບໃໝ່, ສະຫຼຸບ 10 ປີ ການປະຕິບັດມະຕິສູນກາງພັກ ຄັ້ງທີ 05 ສະໄໝ 11, ສະຫຼຸບ 20 ປີ ການປະຕິບັດມະຕິສູນກາງພັກ ຄັ້ງທີ 07 ສະໄໝທີ 09 ກ່ຽວກັບການຜັນຂະຫຍາຍພະລັງມະຫາສາມັກຄີແຫ່ງຊາດ, ສະຫຼຸບ 15 ປີ ການປະຕິບັດມະຕິສູນກາງພັກ ຄັ້ງທີ 07 ສະໄໝທີ 10 ກ່ຽວກັບການກໍ່ສ້າງຖັນແຖວປັນຍາຊົນໄລຍະແຫ່ງອຸດສະຫະກໍາ ແລະ ທັນສະໄໝ, ສະຫຼຸບ 10 ປີ ການປະຕິບັດມະຕິສູນກາງພັກ ຄັ້ງທີ 08 ສະໄໝ 11 ກ່ຽວກັບຍຸດທະສາດປ້ອງກັນຊາດໃນໄລຍະໃໝ່ ແລະ ຮ່າງແຜນການຄະນະບໍລິຫານງານສູນກາງພັກ ສະໄໝທີ 14. ສະຫາຍ ຫງວຽນ ຟູຈອງ ໄດ້ເນັ້ນໜັກໃຫ້ຄົ້ນຄວ້າບັນຫາພົ້ນເດັ່ນ, ບັນດາໝາກຜົນທີ່ຍາດໄດ້, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆ.

ວັນທີ 06/10/2023, ກອງປະຊຸມຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ຄັ້ງທີ XIII ສະໄໝທີ XIII ເພື່ອປຶກສາຫາລືກ່ຽວກັບບົດສະຫຼຸບ 15 ປີ ການປະຕິບັດມະຕິສະບັບເລກທີ 27-NQ/TW, ລົງວັນທີ 06/08/2008 ຂອງຄະນະບໍລິຫານງານສູນກາງພັກ ຊຸດທີ X ກ່ຽວກັບວຽກງານກໍ່ສ້າງຖັນແຖວພະນັກງານໃນໄລຍະແຫ່ງການຍູ້ແຮງອຸດສາຫະກໍາ ແລະ ທັນສະໄໝຂອງປະເທດຊາດ. ສະຫາຍ ນາງ ເຈື່ອງທິມາຍ, ກໍາມະການກົມການເມືອງ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ໄດ້ຊີ້ນໍາໃນກອງປະຊຸມປຶກສາຫາລືກ່ຽວກັບການຄັດເລືອກແຕ່ງຕັ້ງ ສະຫາຍ ເລຮວ່າຍຈຸງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ເຂົ້າຮັບໜ້າທີ່ໃນຄະນະເລຂາທິການສູນກາງພັກ ສະໄໝ XIII.

### 2) ພັກກອມມູນິດຈີນ

ວັນທີ 10/10/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ; ທ່ານ ຫວັງອີ້, ຫົວໜ້າຫ້ອງການຄະນະກໍາມະການວຽກງານການຕ່າງປະເທດສູນກາງພັກກອມມູນິດຈີນ, ລັດຖະມົນຕີຕ່າງປະເທດ ໄດ້ຕ້ອນຮັບທ່ານ Chuck Schumer, ສະມາຊິກອາວຸໂສສະພາສູງພັກເດໂມແຄັດ ຂອງອາເມລິກາ ໃນໂອກາດຢ້ຽມຢາມຈີນ ຢ່າງເປັນທາງການ. ທ່ານ ສີ ຈິ້ນຜິງ ກ່າວວ່າ ການພົວພັນຈີນ-ອາເມລິກາ ຢູ່ໃນສະພາບການປ່ຽນແປງ ແລະ ສັບສົນ, ການຟື້ນຟູສາຍພົວພັນຂອງສອງປະເທດມີຄວາມສໍາຄັນຢ່າງຍິ່ງຕໍ່ປະຊາຄົມໂລກ. ທ່ານ Chuck Schumer ກ່າວວ່າ ອາເມລິກາ ແລະ ຈີນ ຈະຮ່ວມກັນກໍານົດທິດທາງຂອງໂລກ, ການຟື້ນຟູສາຍພົວພັນຂອງສອງປະເທດ ສາມາດຫຼຸດຜ່ອນຄວາມເຄັ່ງຕຶງໃນພາກພື້ນ ແລະ ສາກົນ.

ວັນທີ 11/10/2023, ຈີນ ໄດ້ເຜີຍແຜ່ປຶ້ມປົກຂາວກ່ຽວກັບຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງ (BRI) ທີ່ນໍາສະເໜີຜົນສໍາເລັດຕະຫຼອດໄລຍະ 10 ປີ ຜ່ານມາ ແລະ ບາງຈຸດພົ້ນເດັ່ນເພື່ອໃຫ້ປະຊາຄົມໂລກມີຄວາມເຂົ້າໃຈຕໍ່ກັບຂໍ້ລິເລີ່ມດັ່ງກ່າວ ກໍຄືເປົ້າໝາຍສູງສຸດຂອງ BRI ແມ່ນການສ້າງໂລກທີ່ມີຊະຕາກໍາຮ່ວມກັນ, ການພັດທະນາຄວາມຈະເລີນຮຸ່ງເຮືອງຮ່ວມກັນ, ການພັດທະນາແບບກວມລວມ ແລະ ຍືນຍົງ. ປັດຈຸບັນ, ຈີນ ໄດ້ລົງນາມຮ່ວມມືໃນຂໍ້ລິເລີ່ມ BRI ຫຼາຍກວ່າ 200 ສະບັບ ກັບ 150 ກວ່າ ປະເທດ, 30 ອົງການຈັດຕັ້ງສາກົນ, ການເຊື່ອມຕໍ່ທາງບົກ ໄດ້ກໍ່ສ້າງ 06 ແລວເສດຖະກິດ, ເຊື່ອມຕໍ່ທາງນໍ້າມີທ່າເຮືອ 117 ແຫ່ງໃນ 43 ປະເທດ, ເຊື່ອມຕໍ່ທາງອາກາດກັບ 104 ປະເທດ, ມູນຄ່າການຄ້າ-ການລົງທຶນກັບບັນດາປະເທດ 19,1 ຕື້ໂດລາໃນ 10 ປີ ຜ່ານມາ ແລະ ລົງນາມຂໍ້ຕົກລົງການຄ້າເສລີ 21 ສະບັບ ກັບ 27 ປະເທດ.

### 3) ພັກແຮງງານເກົາຫຼີ

ວັນທີ 28/09/2023, ສະພາປະຊາຊົນສູງສຸດ ສປປ ເກົາຫຼີ ໄດ້ດໍາເນີນກອງປະຊຸມສະໄໝສາມັນ ຄັ້ງທີ 09 ສະໄໝທີ XIV ໂດຍການເຂົ້າຮ່ວມຂອງ ສະຫາຍ ກິມເຈີງອຸນ, ຜູ້ນໍາສູງສຸດຂອງ ສປປ ເກົາຫຼີ. ກອງປະຊຸມໄດ້ປຶກສາຫາລືແລະ ຮັບຮອງເອົາບັນດາມະຕິ ດັ່ງນີ້: 1) ຮັບຮອງເອົາກົດໝາຍວ່າດ້ວຍການພັດທະນານິວເຄຼຍ ໂດຍກໍານົດຢູ່ໃນມາດຕາ

58 ໝວດທີ 04 ຂອງລັດຖະທຳມະນູນ ສປປ ເກົາຫຼີ; 2) ກົດໝາຍວ່າດ້ວຍການຮັບປະກັນສິດຂອງຄົນພິການ; 3) ກົດໝາຍວ່າດ້ວຍຊັບພະຍາກອນ; 4) ກົດໝາຍວ່າດ້ວຍການຄຸ້ມຄອງລັດຖະກອນ; 5) ການກວດກາຄືນການປະຕິບັດກົດໝາຍຂອງ ສປປ ເກົາຫຼີ ກ່ຽວກັບຂະແໜງການເງິນ; 6) ການປ່ຽນຊື່ຈາກອົງການພັດທະນາການບິນອາວະກາດແຫ່ງຊາດມາເປັນ ອົງການເຕັກໂນໂລຊີອາວະກາດແຫ່ງຊາດທົ່ວປະເທດ ແລະ 7) ການແຕ່ງຕັ້ງຕຳແໜ່ງຄະນະລັດຖະບານ ຈຳນວນ 05 ສະຫາຍ ດັ່ງນີ້: ສະຫາຍ An Kyong Gun, ເປັນລັດຖະມົນຕີກະຊວງອຸດສາຫະກຳກໍ່ສ້າງເຄື່ອງຈັກ; ສະຫາຍ Ri Sun Chol, ເປັນລັດຖະມົນຕີຄວບຄຸມການກໍ່ສ້າງ; ສະຫາຍ Jon Chol Su, ເປັນລັດຖະມົນຕີທີ່ດິນ ແລະ ການປົກປັກຮັກສາສິ່ງແວດລ້ອມ; ສະຫາຍ Kim Kwang Jin, ເປັນລັດຖະມົນຕີການຈັດຊື້ສະບຽງອາຫານ ແລະ ບໍລິຫານ ແລະ ສະຫາຍ Paek Min Gwang, ເປັນປະທານທະນາຄານກາງ.

### 4) ພັກກອມມູນິດກູບາ

ວັນທີ 29/09/2023, ຄະນະກຳມະທິການປ້ອງກັນການປະຕິວັດກູບາ ໄດ້ຈັດກອງປະຊຸມໃຫຍ່ທົ່ວປະເທດ ຄັ້ງທີ X ໂດຍການເຂົ້າຮ່ວມຂອງ ສະຫາຍ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ. ກອງປະຊຸມໄດ້ລາຍງານກ່ຽວກັບການປະຕິບັດໜ້າທີ່ ແລະ ພາລະບົດບາດຂອງຄະນະກຳມະການປ້ອງກັນການປະຕິວັດກູບາໃນຂອບເຂດທົ່ວປະເທດ, ໄດ້ປຶກສາຫາລືແລກປ່ຽນໃນການຈັດຕັ້ງປະຕິບັດວຽກງານປ້ອງກັນການປະຕິວັດກູບາ ເພື່ອໃຫ້ສອດຄ່ອງກັບການສ້າງສັງຄົມນິຍົມໃນໄລຍະໃໝ່. ສະຫາຍ Miguel ກ່າວວ່າ ຄະນະກຳມະທິການປ້ອງກັນການປະຕິວັດກູບາ ເປັນອົງການຈັດຕັ້ງທີ່ມີບົດບາດສຳຄັນຕໍ່ການປະຕິວັດກູບາໃນໄລຍະຜ່ານມາ, ຈຶ່ງສືບຕໍ່ປະຕິບັດໜ້າທີ່ຂອງຕົນເພື່ອຕ້ານກັບການແຊກແຊງຂອງອາເມລິກາ ແລະ ພັນທະມິດ.

### 5) ຜົນການເລືອກຕັ້ງທົ່ວໄປໂປໂລຍ

ວັນທີ 15/10/2023, ໂປໂລຍ ໄດ້ຈັດການເລືອກຕັ້ງທົ່ວໄປ ສະໄໝທີ X ໂດຍມີ 25 ພັກການເມືອງລົງ ສະໝັກຈາກທັງໝົດ 114 ພັກ, ມີປະຊາຊົນລົງຄະແນນສຽງເລືອກຕັ້ງປະມານ 29,09 ລ້ານ. ຜົນການເລືອກຕັ້ງພັກກົດໝາຍ ແລະ ຄວາມຍຸຕິທຳ (Law and Justice) ເປັນພັກກຳອຳນາດໃນປັດຈຸບັນ ໄດ້ຮັບຄະແນນສຽງສະໜັບສະໜູນ 35,4% (194 ບ່ອນນັ່ງ) ຈາກທັງໝົດ 460 ບ່ອນນັ່ງໃນສະພາ; ພັກເຕົ້າໂຮມພົນລະເຮືອນ KO (Civic Coalition) ໄດ້ 30,7% (157 ບ່ອນນັ່ງ); ພັກຊ່ອງທາງທີສາມ TD (Third Way) ໄດ້ 14,4% (65 ບ່ອນນັ່ງ); ພັກຝ່າຍຊ້າຍ Lewica ໄດ້ 8,5% (30 ບ່ອນນັ່ງ); ພັກຮ່ວມກຸ່ມອິດສະຫຼະ ແລະ ເອກະລາດ ໄດ້ 7,1% (11 ບ່ອນນັ່ງ). ສ່ວນພັກອື່ນໆ ໄດ້ບໍ່ຮອດ 5%. ຕໍ່ໄຊຊະນະດັ່ງກ່າວ, ພັກ PiS ຈະໄດ້ຈັດຕັ້ງລັດຖະບານປະສົມ ເພື່ອໃຫ້ໄດ້ບ່ອນນັ່ງສ່ວນໃຫຍ່ໃນສະພາ (ຫຼາຍກວ່າ 231 ບ່ອນນັ່ງ).

### 6) ການເລືອກຕັ້ງສະມາຊິກລັດຖະສະພາສະໂລວາກີ

ວັນທີ 30/09/2023, ສະໂລວາກີ ໄດ້ຈັດການເລືອກຕັ້ງສະມາຊິກລັດຖະສະພາກ່ອນກຳນົດ ໂດຍມີພັກການເມືອງລົງສະໝັກທັງໝົດ 48 ພັກການເມືອງ ເພື່ອເລືອກເອົາບ່ອນນັ່ງໃນສະພາທັງໝົດ 150 ບ່ອນນັ່ງ, ມີປະຊາຊົນມາໃຊ້ສິດເລືອກຕັ້ງປະມານ 4,43 ລ້ານຄົນ (80% ຂອງຜູ້ມີສິດເລືອກຕັ້ງ). ຈາກຜົນການເລືອກຕັ້ງພັກ SMER (ພັກຝ່າຍຊ້າຍ) ນຳໂດຍ ທ່ານ Robert Fico, ອະດີດນາຍົກລັດຖະມົນຕີສອງສະໄໝ ໄດ້ຮັບຄະແນນສຽງສະໜັບສະໜູນ 22,95% (42 ບ່ອນນັ່ງໃນສະພາ); ພັກ PS (ພັກທີ່ສະໜັບສະໜູນອູແກຣນ) ໄດ້ຮັບ 17,96% (32 ບ່ອນນັ່ງ); ພັກ HIAS ໄດ້ 14,7% (27 ບ່ອນນັ່ງ); ພັກ OL'ano ໄດ້ 8,9% (16 ບ່ອນນັ່ງ); ພັກ KDH ໄດ້ 6,82% (12 ບ່ອນນັ່ງ); ພັກ SASKA ໄດ້ 6,32%(11 ບ່ອນນັ່ງ) ແລະ ພັກ SNS ໄດ້ 5,63% (10 ບ່ອນນັ່ງ).

ພັກ SMER ຂອງ ທ່ານ Fico ຈະໄດ້ເປັນແກນນຳໃນການຈັດຕັ້ງລັດຖະບານຮ່ວມກັບພັກ HIAS ທີ່ໄດ້ຮັບຄະແນນສະໜັບສະໜູນອັນດັບສາມ. ໄຊຊະນະຂອງພັກ SMER ໄດ້ສ້າງຄວາມກັງວົນແກ່ບັນດາປະເທດເອີຣົບ ເນື່ອງຈາກນະໂຍບາຍຫຼັກຂອງ ທ່ານ Fico ແມ່ນການຢຸດຕິການສະໜັບສະໜູນອູແກຣນ, ຂັດຄ້ານການເຂົ້າເປັນສະມາຊິກນາໂຕ້ ຂອງອູແກຣນ ແລະ ຟື້ນຟູສາຍພົວພັນກັບລັດເຊຍ.

**7) ການເລືອກຕັ້ງປະທານາທິບໍດີມານດີບ**

ວັນທີ 30/09/2023, ປະເທດມານດີບ ໄດ້ຈັດການເລືອກຕັ້ງປະທານາທິບໍດີ ຮອບທີ 02 ໂດຍ ທ່ານ Mohared Muiz, ເຈົ້າຄອງນະຄອນຫຼວງມາເລ, ຈາກພັກສະພາປະຊາຊົນແຫ່ງຊາດ (People's National Congress) ໄດ້ຮັບໄຊຊະນະດ້ວຍຄະແນນ 54,04%; ທ່ານ Ibrahim Mohamed Solih, ປະທານາທິບໍດີຄົນປັດຈຸບັນ, ຈາກພັກປະຊາທິປະໄຕມານດີບ (Maldivian Democratic Party) ໄດ້ຄະແນນ 45,96%. ການເລືອກຕັ້ງຄັ້ງນີ້ມີຄວາມສຳຄັນຕໍ່ທິດທາງນະໂຍບາຍຕ່າງປະເທດຂອງມານດີບ ເນື່ອງຈາກວ່າມານດີບເປັນປະເທດທີ່ຢູ່ພາຍໃຕ້ອິດທິພົນຂອງອິນເດຍມາເປັນເວລາດົນນານ ແລະ ນະໂຍບາຍຂອງ ທ່ານ Ibrahim Mohamed Solih ດຳເນີນນະໂຍບາຍການຕ່າງປະເທດອິນເດຍຕ້ອງມາກ່ອນ ນັບຕັ້ງແຕ່ປີ 2018 ເປັນຕົ້ນມາ. ສ່ວນ ທ່ານ Mohared Muiz ແມ່ນມີນະໂຍບາຍການຕ່າງປະເທດສະໜັບສະໜູນ ແລະ ຟື້ນຟູສາຍພົວພັນກັບຈີນ.

**2. ສະພາບພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

ລະຫວ່າງວັນທີ 17-18/10/2023, ສປ ຈີນ ເປັນເຈົ້າພາບຈັດກອງປະຊຸມສຸດຍອດໜຶ່ງແລວໜຶ່ງເສັ້ນທາງ ຄັ້ງທີ III ໂອກາດຄົບຮອບ 10 ປີ (2013-2023) ຂອງຂໍ້ລິເລີ່ມດັ່ງກ່າວທີ່ ນະຄອນປັກກິ່ງ ພາຍໃຕ້ຫົວຂໍ້: ການຮ່ວມມືທີ່ມີຄຸນນະພາບສູງ ຂອບໜຶ່ງແລວ ໜຶ່ງເສັ້ນທາງ: ຮ່ວມກັນເພື່ອພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ. ໂດຍມີບັນດາຄະນະຜູ້ແທນຂັ້ນສູງຈາກບັນດາປະເທດ ແລະ ອົງການຈັດຕັ້ງສາກົນ ທີ່ເປັນຄູ່ຮ່ວມມືຂອງຂໍ້ລິເລີ່ມ ໜຶ່ງແລວໜຶ່ງເສັ້ນທາງຫຼາຍກວ່າ 150 ປະເທດ ແລະ 30 ອົງການຈັດຕັ້ງສາກົນ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນຮ່ວມກັນເພື່ອຊອກຫາຊ່ອງທາງ ແລະ ກາລະໂອກາດໃນການສົ່ງເສີມການຮ່ວມມື ເພື່ອຟື້ນຟູເສດຖະກິດຂອງແຕ່ລະປະເທດ ກໍຄືຟື້ນຟູເສດຖະກິດໂລກ ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ຜ່ອນຄາຍລົງ ໂດຍປຶກສາຫາລືກັນໃນ 03 ຫົວຂໍ້ ຄື: 1.ການເຊື່ອມຈອດໃນເສດຖະກິດໂລກແບບເປີດກ້ວາງ; 2. ເສັ້ນທາງສາຍໄໝສີຂຽວເພື່ອຄວາມກົມກຽວກັບທຳມະຊາດ ແລະ 3. ເສດຖະກິດດິຈິຕອນ ເປັນແຫຼ່ງຂອງການຂະຫຍາຍຕົວໃໝ່. ທ່ານ ສີ ຈິ້ນຜິງ, ປະທານປະເທດຈີນ ໄດ້ກ່າວຄຳເຫັນ ໂດຍໄດ້ເນັ້ນການກໍ່ສ້າງ ໜຶ່ງແລວໜຶ່ງເສັ້ນທາງ ແມ່ນເປັນໄປຕາມ 03 ຫຼັກການ ຄື: ການປຶກສາຫາລືຢ່າງກວ້າງຂວ້າງ, ການປະກອບສ່ວນຮ່ວມ ແລະ ມີຜົນປະໂຫຍດຮ່ວມກັນ. ພ້ອມດຽວກັນ, ໄດ້ປະກາດ 08 ແຜນປະຕິບັດງານຮ່ວມມືກັບປະເທດຕ່າງໆໃນຕໍ່ໜ້າ ເພື່ອຊຸກຍູ້ການຮ່ວມມື ໜຶ່ງແລວໜຶ່ງເສັ້ນທາງ ໃຫ້ມີຄຸນນະພາບສູງຂຶ້ນ ຄື: 1) ການສ້າງເຄືອຂ່າຍການເຊື່ອມຈອດຫຼາຍມິຕິ ຂອງໜຶ່ງແລວໜຶ່ງເສັ້ນທາງ, 2) ການສ້າງເສດຖະກິດໂລກແບບເປີດກວ້າງ, 3) ສ້າງກົນໄກການຮ່ວມມືທີ່ເປັນຮູບປະທຳ ໃນການສະໜັບສະໜູນສ້າງໜຶ່ງແລວໜຶ່ງເສັ້ນທາງທີ່ມີຄຸນນະພາບສູງ, 4) ສົ່ງເສີມການພັດທະນາສີຂຽວ, 5) ຊຸກຍູ້ວິທະຍາສາດ ແລະ ເຕັກໂນໂລຊີນະວັດຕະກຳ, 6) ສົ່ງເສີມການແລກປ່ຽນລະຫວ່າງປະຊາຊົນກັບປະຊາຊົນ, 7) ສ້າງຂອບການຮ່ວມມື ໜຶ່ງແລວ ໜຶ່ງເສັ້ນທາງ ທີ່ມີຄວາມເຊື່ອຖື ແລະ 8) ສ້າງຄວາມເຂັ້ມແຂງໃນການສ້າງສະຖາບັນເພື່ອການຮ່ວມມືສາກົນ ໜຶ່ງແລວໜຶ່ງເສັ້ນທາງ.

ໃນໂອກາດດັ່ງກ່າວ, ທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ປະກອບຄຳເຫັນພາຍໃຕ້ຫົວຂໍ້: ການເຊື່ອມຈອດໃນເສດຖະກິດໂລກແບບເປີດກ້ວາງ ໂດຍໄດ້ເນັ້ນໃສ່ຄວາມສຳຄັນ ແລະ ຜົນສຳເລັດຂອງການຮ່ວມມືພາຍໃຕ້ຂໍ້ລິເລີ່ມ ໜຶ່ງແລວໜຶ່ງເສັ້ນທາງ ໃນໄລຍະ 10 ປີຜ່ານມາ ໂດຍມີເນື້ອໃນບາງຕອນວ່າ ຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງ ມີບົດບາດສຳຄັນໃນການສົ່ງເສີມການຮ່ວມມືດ້ານການພັດທະນາ, ສົ່ງເສີມກົນໄກການຮ່ວມມືຫຼາຍຝ່າຍໃນລະດັບສາກົນ ແລະ ພາກພື້ນຢ່າງມີປະສິດທິຜົນ; ໄດ້ສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການພັດທະນາໃນຫຼາຍດ້ານ, ອັນພົ້ນເດັ່ນ ກໍແມ່ນການພັດທະນາພື້ນຖານໂຄງລ່າງເຊື່ອມໂຍງ-ເຊື່ອມຈອດໃຫ້ເຫັນຢ່າງເປັນຮູບປະທຳທີ່ປະເທດກຳລັງພັດທະນາ ລວມທັງ ສປປ ລາວ, ໂດຍສະເພາະ ສປປ ລາວ ໄດ້ປະຕິບັດໂຄງການດັ່ງກ່າວຢ່າງເປັນຮູບປະທຳ ເຊັ່ນ: ໂຄງການທາງລົດໄຟ ລາວ-ຈີນ, ໂຄງການທາງດ່ວນໃນປະເທດ, ໂຄງການພັດທະນາແລວເສດຖະກິດ ລາວ-ຈີນ, ການຄ້າໃນຂົງເຂດກະສິກຳ, ພະລັງງານສະອາດ ແລະ ອື່ນໆ ເຊິ່ງເຫັນວ່າເປັນການຊຸກຍູ້, ສົ່ງເສີມ ແລະ ຂະຫຍາຍການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນຕະຫຼອດຮອດການຖ່າຍທອດເຕັກໂນໂລຊີທີ່ກ້າວໜ້າ, ການແລກປ່ຽນວັດທະນະທຳ-

ສັງຄົມ ກໍຄືການໄປມາຫາສູ່ກັນລະຫວ່າງປະຊາຊົນສອງຊາດ, ອັນເປັນການສົ່ງເສີມອຸດສາຫະກຳທ່ອງທ່ຽວ, ການສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນໃຫ້ນັບມື້ນັບເລິກເຊິ່ງຍິ່ງຂຶ້ນ.

ວັນທີ 23 ຕຸລາ 2023, ກອງທັບ ສ.ເກົາຫຼີ ໄດ້ເປີດເຜີຍວ່າ ສ.ເກົາຫຼີ ຈະເພີ່ມງົບປະມານເພື່ອຂີດຄວາມສາມາດໃນການປ້ອງກັນຕົນເອງຕໍ່ໄພຂົ່ມຂູ່ທາງນິວເຄຼຍ ແລະ ລູກສອນໄຟທີ່ກຳລັງພັດທະນາຂອງ ສປປ ເກົາຫຼີ, ເຊິ່ງໄລຍະຜ່ານມາ ສປປ ເກົາຫຼີ ໄດ້ທົດລອງລູກສອນໄຟຫຼາຍຄັ້ງໃນປີ 2022. ເດືອນມີນາ 2023 ຜ່ານມາ, ຄະນະກຳມະການສົ່ງເສີມໂຄງການປ້ອງກັນປະເທດ ໄດ້ອະນຸມັດແຜນມູນຄ່າ 3.75 ພັນຕື້ວອນ (2.82 ຕື້ໂດລາສະຫະລັດ) ເພື່ອຊື້ເຮືອບິນ F-35A ຮອດປີ 2028, ປັດຈຸບັນ ກອງທັບ ສ. ເກົາຫຼີ ມີເຮືອບິນດັ່ງກ່າວ ຈຳນວນ 40 ລຳ ທີ່ຜະລິດໂດຍບໍລິສັດ Lockheed Martin ຂອງອາເມລິກາ.

**2) ສະພາບການ ໃນຂົງເຂດເອີຣົບ ແລະ ອາເມລິກາ**

ການໂຈມຕີກັນລະຫວ່າງອູແກຣນ ແລະ ລັດເຊຍ ຍັງສືບຕໍ່ທະວີຄວາມຮຸນແຮງ, ໂດຍສະເພາະໃນເມືອງ Zaporizhia, Bakhmut, Odesa ແລະ Kherson. ການສະໜັບສະໜູນດ້ານອາວຸດຂອງ ອາເມລິກາ ແລະ ຕາເວັນຕົກ ຍິ່ງເຮັດໃຫ້ເກີດຄວາມເສຍຫາຍແຜ່ລາມ ແລະ ແກ່ຍາວຂຶ້ນເລື້ອຍໆ. ໃນວັນທີ 02/10/2023, ກອງປະຊຸມລັດຖະມົນຕີຕ່າງປະເທດຂອງບັນດາປະເທດສະມາຊິກອີຢູ ໄດ້ຈັດຂຶ້ນເປັນຄັ້ງທຳອິດຢູ່ນອກດິນແດນຂອງກຸ່ມອີຢູ ທີ່ ນະຄອນຫຼວງກຽບ ຂອງອູແກຣນ, ໄດ້ສະເໜີການສະໜອງງົບປະມານຊ່ວຍເຫຼືອອູແກຣນ ຕື່ມອີກ 05 ຕື້ເອີໂຣ ໃນປີ 2024. ປັດຈຸບັນ, ເອີຣົບ ຊ່ວຍເຫຼືອອູແກຣນ ຫຼາຍກວ່າ 85 ຕື້ເອີໂຣ (25 ຕື້ ທາງດ້ານການທະຫານ) ນັບຕັ້ງແຕ່ເກີດຂໍ້ຂັດແຍ່ງອູແກຣນ-ລັດເຊຍ ໃນເດືອນ 02/2022 ເປັນຕົ້ນມາ. ຍັງໄດ້ປຶກສາຫາລືກ່ຽວກັບແຜນສັນຕິພາບ 10 ຂໍ້ ຂອງປະທານາທິບໍດີອູແກຣນ ທີ່ໄດ້ຮຽກຮ້ອງໃຫ້ລັດເຊຍ ຖອນຕົວອອກຈາກດິນແດນທີ່ອູແກຣນອ້າງສິດ, ຊົດເຊີຍຄ່າເສຍຫາຍຈາກສົງຄາມ ແລະ ລັດເຊຍຕ້ອງຂຶ້ນສານອາຊະຍາກຳສົງຄາມ. ສ່ວນລັດເຊຍ ໄດ້ອອກຖະແຫຼງການຕອບໂຕ້ກອງປະຊຸມດັ່ງກ່າວ ແລະວ່າຖ້າຫາກທຸກຝ່າຍຢາກໃຫ້ມີຄວາມສະຫງົບ, ມີສັນຕິພາບໃນອູແກຣນ ແລະ ພາກພື້ນ, ບັນດາປະເທດຕາເວັນຕົກ ແລະ ອາເມລິກາ ຕ້ອງຢຸດຕິສະໜອງງົບປະມານ ແລະ ອາວຸດໃຫ້ອູແກຣນ, ຫັນໜ້າເຂົ້າໂຕະເຈລະຈາເພື່ອແກ້ໄຂຂໍ້ຂັດແຍ່ງ.

ວັນທີ 13/10/2023, ເອກອັກຄະລັດຖະທູດລັດເຊຍ ປະຈຳ ສປຊ ກ່າວໃນກອງປະຊຸມສະພາຄວາມໝັ້ນຄົງ ສປຊ ວ່າ ການຕອບໂຕ້ຄືນຂອງອູແກຣນ ໃນໄລຍະ 04 ເດືອນຜ່ານມາ ແມ່ນບໍ່ປະສົບຜົນສຳເລັດໃນການບັນລຸເປົ້າໝາຍຂອງຕົນ ເຮັດໃຫ້ຊີວິດຫຼາຍສິບພັນຄົນສູນເສຍ ໂດຍສ່ວນໃຫຍ່ບໍ່ຕ້ອງການສູ້ຮົບ ແລະ ອາວຸດຍຸດໂທປະກອນຂອງອາເມລິກາ ແລະ ຕາເວັນຕົກ ທີ່ສະໜອງແກ່ອູແກຣນຈຳນວນຫຼາຍຖືກທຳລາຍ. ຂະນະທີ່, ສະພາດູມາ ຂອງລັດເຊຍ ໄດ້ມີມະຕິອອກຈາກການເປັນພາຄີ ວ່າດ້ວຍການຫ້າມທົດລອງອາວຸດນິວເຄຼຍ.

**3) ການເມືອງອາເມລິກາ**

ວັນທີ 30/09/2023, ລັດຖະສະພາອາເມລິກາ ເຫັນດີຜ່ານຮ່າງກົດໝາຍງົບປະມານຊົ່ວຄາວ ໂດຍສະພາສູງເຫັນດີ 88 ສຽງຕໍ່ 09 ສຽງ ແລະ ສະພາຕ່ຳ 335 ສຽງຕໍ່ 91 ສຽງ, ຊຶ່ງງົບປະມານດັ່ງກ່າວຈະຊ່ວຍໃຫ້ລັດຖະບານອາເມລິກາລອດຈາກການຖືກປິດເຮັດວຽກເປັນການຊົ່ວຄາວ (Government Shutdown) ແລະ ສາມາດສືບຕໍ່ປະຕິບັດໜ້າທີ່ໄປຈົນເຖິງວັນທີ 17/11/2023, ຮ່າງງົບປະມານດັ່ງກ່າວ ລວມມີການຈັດສັນງົບປະມານສຳລັບການບັນເທົາທຸກທາງໄພພິບັດຕ່າງໆ 16 ຕື້ໂດລາ ແຕ່ບໍ່ລວມງົບປະມານຊ່ວຍເຫຼືອ ອູແກຣນ.

ວັນທີ 04/10/2023, ສະພາຕ່ຳອາເມລິກາ ໄດ້ລົງມະຕິປົດ ທ່ານ Kevin McCarthy, ປະທານສະພາຕ່ຳ ຈາກພັກລີພັບລີກັນ ດ້ວຍຄະແນນສຽງເຫັນດີ 216 ສຽງ ຕໍ່ 210 ສຽງ ຊຶ່ງຖືເປັນຄັ້ງທຳອິດໃນປະຫວັດສາດອາເມລິກາ. ທ່ານ Joe Biden, ປະທານາທິບໍດີອາເມລິກາ ໄດ້ອອກຖະແຫຼງການຮຽກຮ້ອງໃຫ້ຮີບຮ້ອນຄັດເລືອກປະທານສະພາຕ່ຳຄົນໃໝ່ ເພື່ອໃຫ້ການປະຕິບັດໜ້າທີ່ໃນສະພາຕ່ຳດຳເນີນໄປຕາມກົນໄກ. ຫຼັງຈາກນັ້ນ, ວັນທີ 20/10/2023, ພັກຣີພັບຣີກັນ ໄດ້ສະເໜີຊື່ ທ່ານ Jim Jordan ເປັນປະທານສະພາຕ່ຳ, ແຕ່ການລົງຄະແນນສຽງເຖິງ 3 ຄັ້ງບໍ່ຜ່ານການຮັບຮອງ. ວັນທີ 25/10/2023, ສະພາຕ່ຳອາເມລິກາ ໄດ້ສະເໜີ ແລະ ລົງມະຕິຮັບຮອງໃຫ້ ທ່ານ Mike John, ຈາກພັກຣີພັບຣີກັນ ເປັນປະທານສະພາຕ່ຳ ດ້ວຍຄະແນນສຽງສະໜັບສະໜູນ 220 ສຽງ. ສ່ວນ ທ່ານ Hakeem J. Freys, ຈາກພັກເດໂມແຄັດ ໄດ້ພຽງ 209 ສຽງ.

**4) ຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ**

ວັນທີ 07/10/2023, ກຸ່ມ Hamas ໄດ້ໂຈມຕີ ແລະ ເຂົ້າຍຶດເຂດ Gaza, ຍິງລູກປືນໃຫຍ່ໃສ່ນະຄອນຫຼວງ Tel Aviv, ນະຄອນ Jerusalem ແລະ ທາງພາກໃຕ້ຂອງອິດສະຣາແອນ. ຂະນະທີ່, ອິດສະຣາແອນ ພ້ອມກັບການສະໜັບສະໜູນຈາກ ອາເມລິກາ ແລະ ພັນທະມິດຕາເວັນຕົກ ໄດ້ຕອບໂຕ້ດ້ວຍການໂຈມຕີໃສ່ສະຖານທີ່ຂອງກຸ່ມ Hamas ໃນເຂດ Gaza ຢ່າງໜັກໜ່ວງ ແລະ ໄດ້ມີການຕັດນໍ້າ, ອາຫານ, ໄຟຟ້າ ແລະ ພະລັງງານ. ອິດສະຣາແອນ ຍັງໄດ້ປະກາດປິດຊາຍແດນທາງພາກເໜືອທີ່ຕິດກັບລີບັງ ແລະ ໂຈມຕີຄືນກຸ່ມ Hezbollah ທີ່ປະກາດສະໜັບສະໜູນກຸ່ມ Hamas.

ທ່ານ Benjamin Netanyahu, ນາຍົກລັດຖະມົນຕີອິດສະຣາແອນ ໄດ້ປະກາດວ່າ ອິດສະຣາແອນ ໄດ້ຕົກຢູ່ໃນພາວະສົງຄາມ ພາຍຫຼັງກຸ່ມ Hamas ໄດ້ໂຈມຕີເຂດ Gaza, ກອງທັບອິດສະຣາແອນຈະສົ່ງກຳລັງທະຫານທັງໝົດ ເພື່ອຕອບໂຕ້ ກຸ່ມ Hamas. ຫຼາຍປະເທດໄດ້ປະນາມຕໍ່ເຫດການດັ່ງກ່າວ ເປັນຕົ້ນ ອາເມລິກາ, ຝຣັ່ງ, ເຢຍລະມັນ, ໂຮນລັງ, ອູແກຣນ, ອິນເດຍ ແລະ ປາກິດສະຖານ. ສ່ວນ ອີຣັກ, ອີຣານ, ຊີຣີ, ເຢເມນ ແລະ ກຸ່ມ Hezbollah ຂອງລີບັງ ປະກາດສະໜັບສະໜູນກຸ່ມ Hamas. ຂະນະທີ່, ຈີນ, ລັດເຊຍ ແລະ ຕວັກກີ ໄດ້ຮຽກຮ້ອງໃຫ້ທຸກຝ່າຍອົດທົນອົດກັ້ນ ແລະ ແກ້ໄຂບັນຫາດ້ວຍສັນຕິວິທີ.

ຮອດວັນທີ 27/10/2023, ມີຜູ້ເສຍຊີວິດຫຼາຍກວ່າ 8.300 ຄົນ ແລະ ບາດເຈັບຫຼາຍກວ່າ 21.000 ຄົນ. ນອກນັ້ນ, ຊາວມຸດສະລິມຢູ່ຕ່າງປະເທດໄດ້ປະທ້ວງສະໜັບສະໜູນປາແລັກສະຕິນ ເຊັ່ນ: ປະຊາຊົນໃນນະຄອນຫຼວງລອນດອນຂອງອັງກິດ ຫຼາຍກວ່າ 100.000 ຄົນ ໄດ້ປະທ້ວງຮຽກຮ້ອງໃຫ້ຢຸດຍິງທັນທີ ແລະ ຫຼີກທາງໃຫ້ການຊ່ວຍເຫຼືອທາງດ້ານມະນຸດສະທຳເຂົ້າໄປໃນເຂດ Gaza. ສ່ວນ ຢູ່ ນະຄອນຫຼວງກົວລາລຳເປີ ຂອງມາເລເຊຍ, ນະຄອນຫຼວງແບງລັງ ຂອງເຢຍລະມັນ ມີປະຊາຊົນຫຼາຍພັນຄົນໄດ້ປະທ້ວງເພື່ອສະໜັບສະໜູນປາແລັດສະຕິນ.

ສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ໄດ້ປະຊຸມໃຫ້ລົງມະຕິຢຸດຍິງ ແລະ ແກ້ໄຂຂໍ້ຂັດແຍ່ງດ້ານມະນະສະທຳຕໍ່ກັບປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກຂໍ້ຂັດແຍ່ງ ລະຫວ່າງປາແລັດສະຕິນ ແລະ ອິດສະຣາແອນ ໃນເຂດ Gaza, ແຕ່ອາເມລິກາ ໄດ້ຄັດຄ້ານ. ປັດຈຸບັນ, ມີລົດ 190 ກວ່າຄັນຂົນສິ່ງເຄື່ອງບັນເທົາທຸກ 3.000 ກວ່າໂຕນຜ່ານດ່ານ Rafah, ປະເທດເອຢິບ ເຂົ້າໄປຊ່ວຍເຫຼືອປະຊາຊົນໃນເຂດ Gaza

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ ແລະ ບັນດາສະຖານທູດແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນໍາ ຄຕພ

### 1) ຫົວຫນ້າຄະນະພົວພັນຕ່າງປະເທດສູນກາງພັກ ຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ



ໃນວັນທີ 15 ຕຸລາ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ພົບປະ ກັບ ສະຫາຍ ຫລິວ ຈ້ຽນຊາວ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ທີ່ ນະຄອນຫລວງປັກກິ່ງ, ເຊິ່ງສອງຝ່າຍ ໄດ້ຕີລາຄາສູງ ຕໍ່ໝາກຜົນຂອງການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງປະເທດ ກໍຄື ລະຫວ່າງ ສອງຄະນະພົວພັນຕ່າງປະເທດສູນກາງພັກລາວ-ຈີນ ໃນໄລຍະຜ່ານມາ, ໄດ້ແລກປ່ຽນຄໍາຄິດເຫັນ ກ່ຽວກັບ ການເສີມຂະຫຍາຍສາຍພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງຄະນະພົວພັນຕ່າງປະເທດສູນກາງພັກ ແລະ ທັດສະນະ ກ່ຽວກັບບັນຫາສາກົນ ແລະ ພາກພື້ນ ທີ່ສອງຝ່າຍໃຫ້ຄວາມສົນໃຈ.

ສອງຝ່າຍເຫັນດີເອກະພາບ ສືບຕໍ່ຮັດແໜ້ນການປະສານທົບກັນ, ເຮັດຫນ້າທີ່ເປັນເສນາທິການໃຫ້ແກ່ສູນກາງພັກ, ຈັດຕັ້ງປະຕິບັດແຜນການຮ່ວມມື ລະຫວ່າງ ສອງພັກ ແລະ ສອງຄະນະພົວພັນຕ່າງປະເທດສູນກາງພັກ ໃຫ້ເກີດດອກອອກຜົນ, ຢືນຢັນທີ່ຈະສືບຕໍ່ໃຫ້ການສະຫນັບສະຫນູນ ເຊິ່ງກັນ ແລະ ກັນ ແລະ ປະສານສົມທົບກັນຢ່າງໃກ້ຊິດໃນເວທີພາກພື້ນ ແລະ ສາກົນ, ພ້ອມກັນເປັນເຈົ້າການ ແລະ ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍບັນດາເນື້ອໃນຈິດໃຈທີ່ການນໍາສູງສຸດຂອງ ສອງພັກ, ສອງລັດ ໄດ້ຕົກລົງກັນຜ່ານມາ ເພື່ອສືບຕໍ່ເພີ່ມພູນຄູນສ້າງສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານຫມັ້ນຄົງຍາວນານ ຕາມທິດ 4 ດີ ໃຫ້ເຂົ້າສູ່ລວງເລິກ ແລະ ຮ່ວມກັນສ້າງຄູ່ຮ່ວມຊະຕາກໍາ ລາວ-ຈີນ ດ້ວຍມາດຕະຖານສູງ, ຄຸນນະພາບສູງ ແລະ ລະດັບສູງກວ່າເກົ່າ.

ກ່ອນຫນ້ານັ້ນ ໃນວັນທີ 14 ຕຸລາ 2023 ຄະນະຜູ້ແທນ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຢຸນນານ, ສປ ຈີນ ເຊິ່ງ ສະຫາຍ ທອງສະຫວັນ ພົມວິຫານ ໄດ້ພົບປະກັບ ສະຫາຍ ສີ ຢູ້ກ່າງ, ກໍາມະການສໍາຮອງສູນກາງພັກ, ຮອງເລຂາຄະນະພັກແຂວງ, ອະທິການບໍດີໂຮງຮຽນພັກ, ໂຮງຮຽນການປົກຄອງແຂວງຢຸນນານ ເຊິ່ງສອງຝ່າຍ ໄດ້ພ້ອມກັນຕີລາຄາ ການຈັດຕັ້ງຜັນຂະຫຍາຍກົນໄກການຮ່ວມມືລະຫວ່າງ ສອງພັກ, ສອງຄະນະພົວພັນຕ່າງປະເທດສູນກາງພັກ ກໍຄື ມູນເຊື້ອມິດຕະພາບ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ກັບ ແຂວງຢຸນນານ ໃນໄລຍະຜ່ານມາ, ໂດຍສະເພາະແມ່ນ ການຮັບປະກັນໃຫ້ແກ່ການເຄື່ອນໄຫວ ຂອງການນໍາສອງພັກ, ສອງປະເທດ ໃຫ້ໄດ້ຮັບຜົນສໍາເລັດ; ຕີລາຄາກົນໄກການແລກປ່ຽນການຢ້ຽມຢາມໄປມາຫາສູ່ກັນ ລະຫວ່າງສອງຝ່າຍ, ການແລກປ່ຽນຄະນະວິຊາການ ແລະ ການຝຶກອົບຮົມດ້ານເຕັກນິກວິຊາການຕ່າງໆຂອງສອງຝ່າຍ, ເອກະພາບກັນ ສືບຕໍ່ເພີ່ມທະວີການພົວພັນຮ່ວມ

ມີສອງຝ່າຍ ກໍຄື ການຮັກສາການປະສານສົມທົບກັນຢ່າງໃກ້ຊິດໃນຕໍ່ໜ້າ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຈີນ ໃຫ້ນັບມື້ນັບຫລາຍຂຶ້ນ.

2) **ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະຜູ້ແທນ ພັກກອມມູນິດສະຫະພັນຣັດເຊຍ ປະຈໍາ ສະພາດູມານະຄອນຫຼວງມົດສະກູ**



ວັນທີ 02 ຕຸລາ 2023, ທີ່ ສໍານັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ເດນິສ ອັນເດຣເຢວິດ ປາຣເຟນົບ (Denis Andreevich Parfenov), ສະມາຊິກສະພາດູມາສະຫະພັນຣັດເຊຍ, ເລຂາທິການອົງຄະນະພັກນະຄອນຫຼວງມົດສະກູ, ກໍາມະການສູນກາງພັກກອມມູນິດສະຫະພັນຣັດເຊຍ ພ້ອມດ້ວຍຄະນະທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ແຕ່ວັນທີ 29 ກັນຍາ - 06 ຕຸລາ 2023.

ໃນການພົບປະ ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງຄະນະຜູ້ແທນພັກກອມມູນິດສະຫະພັນຣັດເຊຍ ໃນຄັ້ງນີ້ ແລະ ໄດ້ແຈ້ງສະພາບພົ້ນເດັ່ນ, ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ຝ່າຍຣັດເຊຍຊາບ, ພ້ອມທັງຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມ ລະຫວ່າງ ພັກ ປປ ລາວ ແລະ ພັກກອມມູນິດສະຫະພັນຣັດເຊຍ ຕະຫຼອດໄລຍະຜ່ານມາ, ເຊິ່ງສາຍພົວພັນດັ່ງກ່າວ ໄດ້ເປັນການປະກອບສ່ວນສໍາຄັນເຂົ້າໃນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງປະເທດ ລາວ ແລະ ຣັດເຊຍ ໃຫ້ນັບມື້ນັບແຕກດອກອອກຜົນຍິ່ງໆຂຶ້ນ.

ໃນໂອກາດດັ່ງກ່າວ, ສະຫາຍ ເດນິສ ອັນເດຣເຢວິດ ປາຣເຟນົບ ກໍໄດ້ກ່າວສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ການຕ້ອນຮັບອັນອົບອຸ່ນຖານມິດສະຫາຍອັນສະໜິດສະໜົມຈາກຝ່າຍລາວ. ພ້ອມທັງໄດ້ແຈ້ງໃຫ້ຊາບກ່ຽວກັບການມາຢ້ຽມຢາມ ສປປ ລາວ ຄັ້ງນີ້ ຄະນະຜູ້ແທນພັກກອມມູນິດສະຫະພັນຣັດເຊຍ ໄດ້ພົບປະເຮັດວຽກກັບອົງຄະນະພັກນະຄອນຫຼວງວຽງຈັນ; ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ສູນກາງສະຫະພັນແມ່ຍິງລາວ, ສະມາຄົມມິດຕະພາບລາວ-ຣັດເຊຍ, ສູນວິທະຍາສາດ ແລະ ວັດທະນະທໍາຣັດເຊຍ, ຢ້ຽມຊົມການຮຽນການສອນພາສາຣັດເຊຍຢູ່ໂຮງຮຽນມັດທະຍົມຕົ້ນ ເພຍວັດ, ຢ້ຽມຊົມສະຖານທີ່ທ່ອງທ່ຽວທາງປະຫວັດສາດໃນນະຄອນຫຼວງວຽງຈັນ ແລະ ຢ້ຽມຊົມສະຖານທີ່ທ່ອງທ່ຽວທາງທໍາມະຊາດ “ນໍ້າກັດຍໍລະປາ”, ເຂດເສດຖະກິດປູກຝັງລ້ຽງສັດຕ່າງໆ ຢູ່ແຂວງອຸດົມໄຊ.

ນອກຈາກນັ້ນ, ສອງຝ່າຍຍັງໄດ້ປຶກສາຫາລືກັນ ກ່ຽວກັບ ການສົ່ງເສີມການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ, ການເປີດສາຍການບິນຄືນໃໝ່ ຈາກນະຄອນຫຼວງມົດສະກູ-ວຽງຈັນ-ມົດສະກູ, ພ້ອມນັ້ນຝ່າຍຣັດເຊຍມີຄວາມສົນໃຈຮ່ວມມື ຊື້-ຂາຍ ກາເຟຈາກລາວ.

ໃນຕອນທ້າຍ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ອວຍພອນໃຫ້ແກ່ການຢ້ຽມຢາມ ສປປ ລາວ ຂອງຄະນະຜູ້ແທນພັກກອມມູນິດສະຫະພັນຣັດເຊຍ ໃນຄັ້ງນີ້ ຈົ່ງປະສົບຜົນສໍາເລັດຕາມເປົ້າໝາຍ ແລະ ມີຜົນສໍາເລັດອັນໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າໃນພາລະກິດຂອງຕົນ.

**3) ຄະນະຜູ້ແທນພັກ ປປ ລາວ ສໍາເລັດການເຂົ້າຮ່ວມກອງປະຊຸມສາກົນຂອງພັກກອມມູນິດ ແລະ ກໍາມະກອນ (IMCWP) ຄັ້ງທີ 23**




ຄະນະຜູ້ແທນພັກ ປປ ລາວ ນໍາໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສາກົນຂອງບັນດາພັກກອມມູນິດ ແລະ ກໍາມະກອນ (IMCWP) ຄັ້ງທີ 23 ພາຍໃຕ້ຫົວຂໍ້ "ການຕໍ່ສູ້ທາງການເມືອງ ແລະ ອຸດົມການ ເພື່ອປະເຊີນໜ້າກັບລັດທິທຶນນິຍົມ ແລະ ລັດທິຈັກກະພັດນິຍົມ. ພາລະກິດຂອງຊາວກອມມູນິດໃນການແຈ້ງຂໍ້ມູນຂ່າວສານ ແລະ ຂົນຂວາຍຊົນຊັ້ນກໍາມະກອນ, ຊາວໜຸ່ມ, ແມ່ຍິງ ແລະ ປັນຍາຊົນໃນການຕໍ່ສູ້ຕ້ານການກົດຂີ່ຂູດຮີດ, ການປາບປາມ, ກົນອຸບາຍ ຂອງຈັກກະພັດ ແລະ ລັດທິແກ້ປະຫວັດສາດ; ເພື່ອສິດປະຊາທິປະໄຕ ແລະ ສິດທິສັງຄົມຂອງຊາວຜູ້ອອກແຮງງານ ແລະ ປະຊາຊົນ; ຕ້ານລັດທິຊຸນເສີກ ແລະ ສົງຄາມ, ເພື່ອສັນຕິພາບ ແລະ ສັງຄົມນິຍົມ" ແລະ ກອງປະຊຸມໜ່ວຍງານ ວິຊາການຂອງ IMCWP ເຊິ່ງໄດ້ຈັດຂຶ້ນໃນລະຫວ່າງວັນທີ 19-22 ຕຸລາ 2023 ຢູ່ ອິສເມຍ, ປະເທດຕວັກກີ, ໂດຍການເປັນເຈົ້າພາບຂອງພັກກອມມູນິດຕວັກກີ ແລະ ມີຄະນະຜູ້ແທນຈາກບັນດາພັກກອມມູນິດ ແລະ ກໍາມະກອນ, ຂະບວນການຝ່າຍຊ້າຍ ແລະ ຂະບວນການກ້າວໜ້າໃນໂລກທີ່ມາຈາກ 68 ພັກການເມືອງ, ຈາກ 54 ປະເທດ ແລະ ອີກ 7 ພັກການເມືອງອື່ນເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ມີຄວາມໝາຍສໍາຄັນສໍາລັບພັກ ປປ ລາວ ເນື່ອງຈາກພັກ ປປ ລາວ ໄດ້ເຂົ້າຮ່ວມໃນນາມສະມາຊິກໜ່ວຍງານວິຊາການ (IMCWP Working Group) ພາຍຫຼັງໄດ້ຖືກຮັບຮອງເຂົ້າເປັນສະມາຊິກໃນກອງປະຊຸມ IMCWP ຄັ້ງທີ 22 ທີ່ ນະຄອນຫຼວງ ລາຮາວານ, ສ. ກູບາ. ໃນກອງປະຊຸມ, ບັນດາຜູ້ແທນໄດ້ປະກອບຄໍາເຫັນຢ່າງກົງໄປກົງມາ ແລະ ສ້າງສັນ, ຍົກໃຫ້ເຫັນຄວາມຈໍາເປັນໃນການສືບຕໍ່ເຄື່ອນໄຫວຮ່ວມກັນເພື່ອເສີມສ້າງກໍາລັງແຮງຂອງຂະບວນການກອມມູນິດ ແລະ ກໍາມະກອນໃນໂລກ ໃນການຕໍ່ສູ້ຕ້ານພວກນາຍທຶນ ແລະ ລັດທິຈັກກະພັດນິຍົມ; ເພື່ອປົກປ້ອງສິດທິ ແລະ ເສລີພາບຂອງຊົນຊັ້ນກໍາມະກອນ ແລະ ປະຊາຊົນຊາວຜູ້ອອກແຮງງານໃນທົ່ວໂລກ, ເພື່ອສັນຕິພາບ ແລະ ສັງຄົມນິຍົມ.

ໃນກອງປະຊຸມ, ຫົວໜ້າຄະນະຜູ້ແທນພັກ ປປ ລາວ ໄດ້ປະກອບຄໍາເຫັນ ໂດຍໄດ້ຍົກໃຫ້ເຫັນສະພາບພາກພື້ນ ແລະ ສາກົນ ທີ່ກໍາລັງພັນແປໄປຢ່າງໄວວາ, ສັບສົນ ແລະ ຄາດຄະເນໄດ້ຍາກ, ຄວາມພະຍາຍາມມ້າງເພທໍາລາຍກໍາລັງກອມມູນິດ, ກໍາມະກອນ ແລະ ຂະບວນການທີ່ກ້າວໜ້າໃນໂລກ ໂດຍພວກນາຍທຶນ ແລະ ລັດທິຈັກກະພັດດ້ວຍກົນອຸບາຍຕ່າງໆ; ດໍາເນີນກົນອຸບາຍຍຸດທະສາດຫັນປ່ຽນໂດຍສັນຕິ, ສ້າງບັນດາປັດໃຈ ແລະ ກໍາລັງຕ້ານການປະຕິວັດຢູ່ພາຍໃນປະເທດ ເພື່ອມ້າງເພທໍາລາຍການນໍາພາ ຂອງພັກກອມມູນິດ, ກໍາມະກອນ ແລະ ຂະບວນການກ້າວໜ້າ ຢູ່ປະເທດຕ່າງໆ; ຮຽກຮ້ອງໃຫ້ບັນດາພັກກອມມູນິດ, ກໍາມະກອນ ແລະ ຂະບວນການກ້າວໜ້າໃນໂລກເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມສາມັກຄີກັນຢ່າງເດັດດ່ຽວໃນການເຄື່ອນໄຫວຮ່ວມກັນໃນຖານະເປັນກໍາລັງການເມືອງທີ່ສໍາຄັນເພື່ອຕໍ່ສູ້ຕ້ານລັດທິທຶນນິຍົມ ແລະ ລັດທິຈັກກະພັດນິຍົມ; ເນັ້ນໜັກຄວາມສໍາຄັນຂອງສັນຕິພາບ, ເຊິ່ງແມ່ນຄວາມມຸ່ງມາດປາດຖະໜາຂອງມວນມະນຸດ ທັງແມ່ນປັດໄຈທີ່ຂາດບໍ່ໄດ້ຂອງການພັດທະນາມະນຸດຊາດ; ຢືນຢັນຄືນນະໂຍບາຍ

ການຕ່າງປະເທດອັນສະເໝີຕົ້ນສະເໝີປາຍ ຂອງພັກ ປປ ລາວ, ສືບຕໍ່ປະກອບສ່ວນເຂົ້າໃນການຕໍ່ສູ້ຮ່ວມກັບປະຊາຄົມໂລກ ເພື່ອສັນຕິພາບ ແລະ ຄວາມກ້າວໜ້າທາງສັງຄົມ.

ກອງປະຊຸມສາກົນຄັ້ງນີ້ປະສົບຜົນສຳເລັດຢ່າງຈົບງາມ, ໄດ້ເປັນເອກະພາບກັນຮັບຮອງເອົາສະມາຊິກໃໝ່ເຂົ້າໃນກຸ່ມໂຊລິດເນັດເພີ່ມອີກ 2 ພັກ ຄື: ພັກກອມມູນິດເຄນຢາ ແລະ ພັກຂະບວນການກ້າວໜ້າກູເວດ; ໄດ້ຮັບຮອງເອົາແຜນປະຕິບັດງານຂອງກອງປະຊຸມ IMCWP ຄັ້ງທີ 23 ເພື່ອກຳນົດທິດທາງ ແລະ ແຜນງານຂອງຕົນ. ນອກນັ້ນ, ກອງປະຊຸມຍັງໄດ້ຕົກລົງເປັນເອກະພາບມອບໃຫ້ພັກກອມມູນິດລີບັງ ເປັນເຈົ້າພາບຈັດກອງປະຊຸມ IMCWP ຄັ້ງທີ 24.

4) **ຄະນະຜູ້ແທນຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ເຂົ້າຮ່ວມກອງປະຊຸມວ່າດ້ວຍການຮ່ວມມືສາກົນ ໜຶ່ງແລວ ໜຶ່ງເສັ້ນທາງ ຄັ້ງທີ III ແລະ ຢ້ຽມຢາມ ຢູ່ ສປ ຈີນ.**




ໃນວັນທີ 18 ຕຸລາ 2023, ທ່ານ ສົມມາດ ພົລເສນາ ໄດ້ເຂົ້າຮ່ວມກອງປະຊຸມວ່າດ້ວຍການ ຮ່ວມມືສາກົນ ໜຶ່ງແລວ ໜຶ່ງເສັ້ນທາງ ຄັ້ງທີ III ໂດຍມີປະມຸກລັດ, ຫົວໜ້າລັດຖະບານ ແລະ ຄະນະຜູ້ແທນ ຈາກ 150 ປະເທດ ແລະ 30 ອົງການຈັດຕັ້ງສາກົນເຂົ້າຮ່ວມ ຊຶ່ງໃນໂອກາດດັ່ງກ່າວໄດ້ມີຄຳເຫັນພາຍໃຕ້ຫົວຂໍ້ສົ່ງເສີມການເຊື່ອມຈອດ ລະຫວ່າງປະຊາຊົນກັບ ປະຊາຊົນ, ເຊິ່ງໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ຂໍ້ລິເລີ່ມໜຶ່ງແລວ ໜຶ່ງເສັ້ນທາງ ຂອງ ສປ ຈີນ ທີ່ ທ່ານ ສີ ຈິ້ນຜິງ ໄດ້ປະກາດໃນປີ 2013, ຖືເປັນກົນໄກແຫ່ງການ ຮ່ວມມືພະຫຸພາຄີທີ່ທຸກຝ່າຍໄດ້ຮັບຜົນປະໂຫຍດຢ່າງແທ້ຈິງ, ທັງເປີດກວ້າງພັດທະນາເສດຖະກິດໂລກໃນທຸກດ້ານ ໂດຍຍຶດຖືເອົາຄວາມຜາສຸກ ຂອງປະຊາຊົນໃນທົ່ວໂລກເປັນບຸລິມະສິດອັນດັບໜຶ່ງ. ໃນໜຶ່ງທົດສະວັດທີ່ຜ່ານມາໄດ້ພິສູດໃຫ້ເຫັນວ່າ ຂໍ້ລິເລີ່ມໜຶ່ງແລວ ໜຶ່ງເສັ້ນທາງ ເປັນໂຄງການເຊື່ອມຈອດ ລະຫວ່າງຈີນກັບພູມມິພາກອາຊີ, ອາຟຣິກາ ແລະ ເອີຣົບ, ຊຸກຍູ້ການພັດທະນາຮ່ວມກັນ ລະຫວ່າງ ພາກພື້ນ ແລະ ຊຸກຍູ້ການພັດທະນາໂລກຢ່າງມີປະສິດທິຜົນ. ພ້ອມນັ້ນ, ຍັງມີບົດບາດສຳຄັນໃນການສົ່ງເສີມການເຊື່ອມຕໍ່ທົ່ວໂລກ, ຊຸກຍູ້ການເຕີບໂຕເສດຖະກິດໂລກ ແລະ ເປັນເວທີຮ່ວມມືສາກົນເພື່ອການພັດທະນາແບບຍືນຍົງ ແລະ ເປັນເສັ້ນທາງໄປສູ່ຄວາມຈະເລີນຮຸ່ງເຮືອງຂອງທຸກປະເທດ. ການຈັດຕັ້ງປະຕິບັດຂໍ້ລິເລີ່ມ ໜຶ່ງແລວ ໜຶ່ງເສັ້ນທາງ ໂດຍສະເພາະການເຊື່ອມຈອດດ້ານພື້ນຖານໂຄງລ່າງຖືເປັນການສ້າງເງື່ອນໄຂສະດວກໃຫ້ປະຊາຊົນ ຂອງບັນດາປະເທດພາກພື້ນ ແລະ ຂອງໂລກໄດ້ໄປມາຫາສູ່ ແລະ ຮ່ວມມືກັນ ທັງສ້າງເງື່ອນໄຂສະດວກ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ການຄ້າ, ການລົງທຶນ ກໍຄືການຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນໃຫ້ດີຂຶ້ນ.

ນອກຈາກເຂົ້າຮ່ວມກອງປະຊຸມ, ຄະນະຜູ້ແທນຍັງໄດ້ພົບປະສອງຝ່າຍກັບສະມາຄົມປະຊາຊົນຈີນເພື່ອສັນຕິພາບ ແລະ ຫຼຸດຜ່ອນອາວຸດ. ສອງຝ່າຍໄດ້ທົບທວນຕີລາຄາການພົວພັນຮ່ວມມືລະຫວ່າງສອງຄະນະໃນໄລຍະຜ່ານມາ, ແລກປ່ຽນຄຳຄິດເຫັນຕໍ່ສະພາບການພາກພື້ນ ແລະ ສາກົນ ທີ່ ສອງຝ່າຍສົນໃຈ ແລະ ຢືນຢັນຈະສືບຕໍ່ກົນໄກປະສານງານ, ແລກປ່ຽນຂໍ້ມູນຂ່າວສານ, ເປັນເອກະພາບກັນຕໍ່ບັນດາ ພາກພື້ນ ແລະ ສາກົນ ສະໜັບສະໜູນ ເຊິ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ.

# III. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ ຄຕພ

**ສະຫະພັນກຳມະບານ ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ຈັດກອງປະຊຸມສະຫຼຸບກາງສະໄໝ**



ໃນວັນທີ 05 ຕຸລາ 2023 ສະຫະພັນກຳມະບານ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບກາງສະໄໝ ໂດຍການເປັນປະທານຂອງ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນຂອງ ຄຕພ; ມີບັນດາສະຫາຍ ຄະນະບໍລິຫານສະຫະພັນກຳມະບານ ຄຕພ; ບັນດາສະຫາຍຕາງໜ້າໜ່ວຍພັກອ້ອມຂ້າງອົງຄະນະພັກ ຄຕພ; ສະຫາຍຕາງໜ້າສະຫະພັນແມ່ຍິງ ແລະ ອົງການຈັດຕັ້ງຊາວໜຸ່ມ ປປ ລາວ ຄຕພ ຕະຫຼອດຮອດສະມາຊິກກຳມະບານທົ່ວ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ ສະຫາຍ ທົງແກ້ວ ສຸກສະຫວັດ, ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານ ຄຕພ ໄດ້ຜ່ານບົດລາຍງານການເມືອງ ແລະ ທິດທາງແຜນການທ້າຍສະໄໝ 2023-2025 ທີ່ຍົກໃຫ້ເຫັນຜົນສຳເລັດໃນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ຕະຫຼອດໄລຍະ 2 ປີເຄິ່ງຜ່ານມາ, ຊຶ່ງໄດ້ຮັບໃບຍັ້ງຢືນ 5 ເປັນເຈົ້າສອງປີຕິດຕໍ່ກັນຈາກປະທານສູນກາງສະຫະພັນກຳມະບານລາວ. ຈາກນັ້ນ, ສະຫາຍ ເກີລໍ່ ຢ່າງກໍ, ກຳມະການຄະນະບໍລິຫານງານສູນກາງກຳມະບານລາວ, ປະທານສະຫະພັນກຳມະບານ ຄຕພ ໄດ້ຜ່ານບົດສຳຫຼວດການນຳພາລວມ ຂອງຄະນະບໍລິງານຫານສະຫະພັນກຳມະບານ ຄຕພ ກາງສະໄໝ, ຊຶ່ງຍົກໃຫ້ເຫັນດ້ານດີທີ່ຕ້ອງສືບຕໍ່ນຳພາ ແລະ ດ້ານຄົງຄ້າງທີ່ຈະຕ້ອງແກ້ໄຂໃຫ້ມີການຫັນປ່ຽນຢ່າງແຂງແຮງໃນທ້າຍສະໄໝ.

ໃນຕອນທ້າຍກອງປະຊຸມ ໄດ້ຮັບຟັງການໃຫ້ທິດຊີ້ນຳ ແລະ ໂອ້ລົມຂອງ ສະຫາຍ ວາລະໄຊ ເລັ່ງສະຫວັດ ໂດຍໄດ້ເນັ້ນໜັກໃຫ້ຄະນະບໍລິຫານງານກຳມະບານ ຄຕພ ເອົາໃຈໃສ່ນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດວຽກງານກຳມະບານໃນທ້າຍສະໄໝໃຫ້ບັນລຸຜົນຕາມແຜນການທີ່ວາງອອກ, ທັງເປັນເສນາທິການໃຫ້ຄະນະພັກ ຄຕພ ໃນການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ຖັນແຖວພະນັກງານ-ລັດຖະກອນຂອງ ຄຕພ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ ເພື່ອຮັບປະກັນການປະຕິບັດໜ້າທີ່ການເມືອງຂອງ ຄຕພ ໃຫ້ມີໃບໜ້າໃໝ່ກ້າວຂຶ້ນເລື້ອຍໆ.